
ພະຍາດຕິດຕໍ່ທາງເພດສຳພັນ (ພຕພ)



ການຕິດເຊື້ອໝອງໃນແທ້ (Gonorrhea)

ອາການ ແລະ ໝວດອາການໃນຜູ້ຊາຍ:
ເຈັບໃນເວລາຖ່າຍເບົາ, ນ້ຳໝອງຍ້ອຍອອກຈາກ
ປາຍອະໄວຍະວະເພດ, ທ້ຳໄຄ່ບວມ ແລະ ເຈັບ.
ອາການ ແລະ ກຸ່ມອາການໃນຜູ້ຍິງ:
ມີຂົງຂາວຜິດປົກກະຕິ, ເລືອດອອກຫຼັງຈາກການຮ່ວມ ເພດ ຫຼື
ລະຫວ່າງຮອບປະຈຳເດືອນ,
ຫຼາຍເທື່ອໃນແມ່ຍິງບໍ່ສະແດງອາການອອກ.
ການປິ່ນປົວ: **ສາມາດປິ່ນປົວໃຫ້ຫາຍຂາດໄດ້.**



ເຫົ້າຢູ່ອະໄວຍະວະເພດ (Pubic Lice)

ອາການ ແລະ ໝວດອາການ:
ມີອາການຄັນຢູ່ບໍລິເວນອະໂມນ, ແຂບແອ້ຂາ,
ອົ່ນຕາ ແລະ ຄິ້ວ.
ການປິ່ນປົວ: **ສາມາດປິ່ນປົວໃຫ້ຫາຍຂາດໄດ້.**



ການຕິດເຊື້ອຊີຟີລິກ (Syphilis)

ອາການ ແລະ ໝວດອາການ:
ເປັນບາດແຜເປີດໃນຮູອົງມົນ ໂດຍສະເພາະ
ມັກເປັນຢູ່ບໍລິເວນອະໄວຍະວະເພດ, ຮູທະວານ
ແລະ ປາກ ເຊິ່ງບໍ່ເຈັບປານໃດ ແລະ ຈະຄ່ອຍຫາຍຊ້ຳໆ
ການປິ່ນປົວ: **ສາມາດປິ່ນປົວໃຫ້ຫາຍຂາດໄດ້.**



ພະຍາດ ເຮີປິດ ຫຼື ຕຸ່ມນ້ຳໃສ (Herpes Simplex)

ອາການ ແລະ ໝວດອາການ, ການຕິດເຊື້ອເກີດໃໝ່:
ອາການທີ່ຄ້າຍຄືກັບໄອ້ໜັດ (ໄອ້, ໜາວສັ່ນ, ອິດເມື່ອຍ,
ເຈັບຫົວ, ເຈັບກ້າມຊີ້ນ ແລະ ຕ່ອມຕ່າງໆ ໄຄ່ອີ່ນ) ຕຸ່ມຕ່າງໆ
ແລະ ມີບາດແຜຢູ່ອະໄວຍະວະ ເພດ, ນ້ຳອ, ປາກ, ຄໍ, ລີ້ນ ແລະ
ເຕືອກ ການຕິດເຊື້ອທີສອງ: ຕຸ່ມແລະ ມີບາດແຜຕ່າງໆ
ຢູ່ບໍລິເວນອະໄວຍະວະເພດ ແລະ ປາກ
ການປິ່ນປົວ: **ປິ່ນປົວຕາມອາການແຕ່ບໍ່ຫາຍຂາດໄດ້.**



ການຕິດເຊື້ອໝອງໃນທຽມ (Chlamydia)

ອາການ ແລະ ໝວດອາການໃນຜູ້ຊາຍ:
ເຈັບໃນເວລາຖ່າຍເບົາ, ມີນ້ຳໃສຍ້ອຍອອກມາ
ອະໄວຍະວະເພດມີລັກສະນະໄຄ່ອີ່ນ, ບາງຄົນບໍ່ມີອາການເລີຍ.
ອາການ ແລະ ກຸ່ມອາການໃນຜູ້ຍິງ:
ມີຂົງຂາວແບບຜິດປົກກະຕິ, ມີເລືອດອອກຫຼັງຈາກ
ການຮ່ວມເພດ ແລະ ລະຫວ່າງຮອບປະຈຳເດືອນ
ການປິ່ນປົວ: **ສາມາດປິ່ນປົວໃຫ້ຫາຍຂາດໄດ້.**



ຫອມໄກ່ (Genital Warts)

ອາການ ແລະ ໝວດອາການ:
ເປັນຫອມໄກ່ຢູ່ບໍລິເວນອະໄວຍະວະເພດ
ເຊິ່ງໂດຍທົ່ວໄປແລ້ວຈະມີອາການຄັນ.
ການປິ່ນປົວ: ປິ່ນປົວຕາມອາການ
ບໍ່ສາມາດປິ່ນປົວໃຫ້ຫາຍຂາດ



ພະຍາດຂີ້ຫີດ (Scabies)

ອາການ ແລະ ໝວດອາການ:
ຄັນຕາມຜິວໜັງ ພ້ອມດ້ວຍບາດແຜຕ່າງໆໂດຍສະ
ເພາະແມ່ນຫວ່າງນິ້ວມື ແລະ ນ້ຳຕົ່ນ, ແຂນສອກ,
ແຂນດ້ານໃນ ແລະ ຄັນບໍລິເວນອະໄວຍະວະເພດ ແລະ ອັນທະ,
ມີພ້ອຍກໍລະນີທີ່ເປັນຢູ່ຫຼັງ, ໃບໜ້າ ແລະ ໜັງຫົວ.
ການປິ່ນປົວ: **ສາມາດປິ່ນປົວໃຫ້ຫາຍຂາດໄດ້.**



ໂລກເອດສ໌ ແລະ ການຕິດເຊື້ອ (HIV)

ອາການ ແລະ ໝວດອາການໃນໄລຍະເບື້ອງຕົ້ນ:
ສ່ວນຫຼາຍບໍ່ມີອາການສະແດງອອກ ມີແຕ່ເມື່ອເຖິງ
ໄລຍະເປັນເອດສ໌ແມ່ນ (CD4 ໜ້ອຍກວ່າ 200)
ນ້ຳໜັກຫລຸດລົງ, ຖອກທ້ອງ, ອິດເມື່ອຍ,
ຕ່ອມນ້ຳເຫຼືອງໃຫຍ່ຂຶ້ນ ແລະ ເຈັບ, ໄອ້ຊ້ຳເຮື້ອແກ່ຍາວ
ແລະ/ຫຼື ເຫື່ອອອກກາງຄືນ.
ການປິ່ນປົວ: **ບໍ່ສາມາດປິ່ນປົວໃຫ້ຫາຍຂາດໄດ້**
ແຕ່ສາມາດຢັບຢັ້ງໄດ້ດ້ວຍຢາ ARV

ສອບຖາມຂໍ້ມູນເພື່ອເຕີມໄດ້ທີ່: ສະມາຄົມສົ່ງເສີມສຸຂະພາບຄອບຄົວ (ສສສຄ) ເຮືອນເລກທີ 243, ໜ່ວຍ 16
ບ້ານຫາດຊູວົງເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.
ໂທລະສັບ +85621 413261
Email: laopfha@gmail.com ແລະ pfha@outlook.com
Website: pfhalaos.org

ສະມາຄົມສົ່ງເສີມສຸຂະພາບຄອບຄົວ (PFHA)

IPPF International Planned Parenthood Federation
East & South East Asia and Oceania Region